ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈໍາ

ເລກທີ 313 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 30 / 12 / 21

**ມະຕິ**

**ຂອງ ຄະນະປະຈໍາສະພາແຫ່ງຊາດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ວ່າດ້ວຍການໃຫ້ສັດຕະຍາບັນແກ່ ສົນທິສັນຍາວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ສະບັບເລກທີ 155 ແລະ ສົນທິສັນຍາວ່າດ້ວຍ ຂອບແຜນງານການສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ ສະບັບເລກທີ 187**

--------------------------

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈໍາສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານ ນາຍົກລັດຖະມົນຕີ;
- ອີງຕາມ ໜັງສືສະເໜີຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 56/ນຍ, ລົງວັນທີ 15 ມິຖຸນາ 2021;
- ອີງຕາມ ການຕົກລົງຂອງ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຄັ້ງວັນທີ 23 ທັນວາ 2021.

**ຄະນະປະຈໍາສະພາແຫ່ງຊາດຕົກລົງ:**

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ສົນທິສັນຍາວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ສະບັບເລກທີ 155 ແລະ ສົນທິສັນຍາວ່າດ້ວຍຂອບແຜນງານສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານສະບັບເລກທີ 187.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈໍາສະພາແຫ່ງຊາດ

ປະທານ

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ